**ແຜນການສອນ**

**ບົດຮຽນໂຮງຮຽນວັນອາທິດ**

**ວັນອາທິດ ທີ 16 ພຶສພາ 2010 (05-16-2010)**

---

## <u>ຮັກແລະທະນຸຖນອມ</u>

**<u>ຂໍ້ພຣະຄັມພີໃນບົດຮຽນ:</u>** (ເອເຟໂຊ 5:21-33; 1 ເປໂຕ 3:7)

**<u>ເປົ້າໝາຍຂອງບົດຮຽນ:</u>**

ບົດຮຽນນີ້ແມ່ນກ່ຽວກັບອຸດົມຄະຕິຂອງຄຣິສຕຽນຕໍ່ສາຍສັມພັນລະຫວ່າງ ສາມີ ກັບ ພັລຍາ.

**<u>ຄວາມສຳຄັນຂອງບົດຮຽນ:</u>**

ໃນທຳນຽມຂອງພວກເຮົາ, ເຣື່ອງຂອງສ່ວນຕົວ ແລະຄວາມເພິ່ງພໍໃຈ ຂອງແຕ່ລະຄົນນັ້ນ ແມ່ນມີຄຸນຄ່າ. ການເຫັນແກ່ຕົວ ແລະການບໍ່ໃຫ້ກຽດຊຶ່ງກັນແລະກັນ ໃນຄວາມສັມພັນຊີວິດການແຕ່ງງານ ຖືເປັນຂອງທຳມະດາໄປ. ການອອກແບບຂອງພຣະເຈົ້າສຳລັບຄວາມສັມພັນຂອງສາມີແລະພັລຍາ ແມ່ນໃຫ້ທຳຕາມການຍອມຟັງຊຶ່ງກັນແລະກັນ, ຮັກຊຶ່ງກັນແລະກັນ, ນັບຖືແລະໃຫ້ກຽດຊຶ່ງກັນແລະກັນ.

**<u>ຜົນສະທ້ອນຕໍ່ຊີວິດ:</u>**

ບົດຮຽນນີ້ສາມາດຊ່ອຍໃຫ້ສາມີແລະພັລຍາມີຄວາມສັມພັນໃນຊີວິດແຕ່ງງານຂອງພວກເຂົາເຈົ້າເຂັ້ມແຂງຂຶ້ນໂດຍການເຮັດໃຫ້ໜ້າທີ່ຮັບຜິດຊອບຕ່າງໆ ທີ່ພຣະເຈົ້າໄດ້ຊົງໂຜດປະທານໃຫ້ນັ້ນສຳເຣັດຕໍ່ກັນແລະກັນ.

**<u>ການຈັດຕຽມ ແລະແຜນການສອນຂອງຄຣູ:</u>**

1. ອະທິຖານຂໍການຊົງນຳຈາກພຣະວິນຍານບໍຣິສຸດ ກ່ອນສິ່ງອື່ນໝົດ.
2. ສຶກສາຂໍ້ພຣະຄັມພີທີ່ຈະໃຊ້ໃນບົດຮຽນນີ້.
3. ຖາມລຶ້ມຄວາມຊົງຈຳຂອງນັກຮຽນໃນບົດຮຽນອາທິດແລ້ວນີ້.
4. ອ່ານ ແຜນການສອນ ໝາຍບ່ອນສຳຄັນ, ປັບປຸງ, ແກ້ໄຂ, ຈົດບັນທຶກ ແລະ ອື່ນໆ........
5. ແຈກຢາຍບົດຮຽນໃຫ້ນັກຮຽນທຸກຄົນ

**<u>ແນະນຳ:</u>**

- ຫົວຂໍ້ບົດຮຽນມື້ນີ້ແມ່ນ ໃຫ້ຮັກແລະທະນຸຖນອມ ຊຶ່ງບໍ່ແມ່ນໃນທາງອື່ນຈາກການແຕ່ງງານ, ມີຫລາຍຄົນໄດ້ສາບານໃຫ້ຄຳໝັ້ນສັນຍາຕໍ່ກັນໃນວັນແຕ່ງງານຂອງເຂົາເຈົ້າ.
- ສ່ວນຫລາຍພວກເຮົາໄດ້ເຂົ້າຮ່ວມງານແຕ່ງງານໂດຍທີ່ບໍ່ໄດ້ເບິ່ງບໍ່ໄດ້ຄຶດຢ່າງເລິກເຊິ່ງ. ຫລັງຈາກແຕ່ງງານບໍ່ດົນນານພໍເທົ່າໃດ, ກໍມີຝ່າຍນຶ່ງຫລືທັງສອງກໍມີການຫລົງຜິດໃນຄວາມເປັນອິສຣະ ເພາະວ່າເຂົາເຈົ້າມີຄວາມຮູ້ສຶກໃນຄວາມຕ້ອງການຂອງເຂົາເຈົ້າບໍ່ໄດ້ເປັນໄປຕາມຄວາມຕັ້ງໃຈເອົາໄວ້.
- ພວກເຮົາສາມາດພົບຄວາມລາບລື້ນ ແລະເຂັ້ມແຂງຍືນຍົງໃນຊີວິດແຕ່ງງານໄດ້ ໃນເມື່ອພວກເຮົາໃຫ້

ພຣະເຈົ້າເຕີມເຕັມໜ້າທີ່ຮັບຜິດຊອບຂອງພວກເຮົາໃຫ້ມີຕໍ່ກັນແລະກັນ.

1. <u>ການເຂົ້າໃຈໃນການຍອມຟັງ:</u> (ເອເຟໂຊ 5:21-24)

- ຂໍໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ເອເຟໂຊ 5:21-24
- ໃຫ້ນັກຮຽນສຶກສາ ໃນການຍອມຟັງ, ເຊັ່ນຕົວຢ່າງການເຊື່ອຟັງຂອງພຣະເຢຊູ.
- ມີຈັກຄົນທີ່ຢາກມີຊີວິດທີ່ຍອມເຊື່ອຟັງຢູ່ຢ່າງຍາວນານ? ໃນເວລາທ່ານໄດ້ຍິນຄໍາວ່າການຍອມຟັງແລ້ວ ມີຫຍັງແດ່ທີ່ນອກເໜືອໄປກວ່ານີ້ທີ່ເຮັດໃຫ້ທ່ານມີຄວາມຄັດຄ້ານຂຶ້ນມາໃນໃຈຂອງທ່ານ?
- ຄວາມສັມພັນຂອງການແຕ່ງງານແມ່ນການສຖາປານາໂດຍພຣະເຈົ້າ. ນະໂຍບາຍການແຕ່ງງານຂອງພຣະອົງ, ທີ່ທ່ານໂປໂລກ່າວຢູ່ໃນທີ່ນີ້, ເປັນການສົມຄວນທີ່ເປັນການນັບຖືທີ່ດີທີ່ສຸດສໍາລັບແຜນການໃນການແຕ່ງງານ.
- ນະໂຍບາຍເຫລົ່ານີ້ຈະຮັກສາຄວາມສັມພັນຂອງສາມີ-ພັລຍາ, ໃນການທີ່ໃຫ້ທັງສອງມີຄວາມຮັກ ແລະ ນັບຖືຊຶ່ງກັນແລະກັນ.
- ເປັນການສໍາຄັນທີ່ໃຫ້ນຶກເຖິງການຍອມຟັງດ້ວຍຄວາມເຕັມໃຈ ແລະກະທໍາດ້ວຍຄວາມສມັກໃຈ, ໂດຍບໍ່ແມ່ນໃຫ້ມີອໍານາດເປັນໂສ້ລ່າມຢູ່ໃນບ້ານເຮືອນ. ທ່ານໂປໂລບໍ່ພຽງແຕ່ໃຫ້ເປັນການສັ່ງສອນຜູ້ເປັຍພັລຍາໃຫ້ມີນິສັຍອັນຖືກຕ້ອງຕໍ່ສາມີເທົ່ານັ້ນ, ແຕ່ໃຫ້ນັບຖືສາມີຜູ້ຊຶ່ງເປັນຫົວໜ້າຄອບຄົວ.
- ທ່ານໂປໂລກໍໄດ້ທ້າທາຍຕໍ່ຄົນທັງຫລາຍໃນສມັຍນັ້ນ. ຜູ້ຍິງທັງຫລາຍໃນສມັຍຂອງທ່ານໂປໂລບໍ່ໄດ້ພິຈາຣະນາໃຫ້ເຫັນເປັນທີ່ໜ້າສົນໃຈ. ບົດບາດສໍາຄັນຂອງເຂົາເຈົ້າຄື ໃຫ້ເປັນຜູ້ທີ່ດູແລຮັກສາບ້ານເຮືອນ ແລະລ້ຽງດູລູກ. ໃນຂໍ້ຕ່າງໆເຫລົ່ານີ້, ທ່ານໂປໂລໄດ້ປ່ຽນຄວາມເຂົ້າໃຈທັງສອງພັລຍາແລະສາມີ ໂດຍການປຽບທຽບບົດບາດຂອງເຂົາເຈົ້າໃສ່ກັບພຣະຄຣິດກັບຄຣິສຕະຈັກ. ພັລຍາຕ້ອງຍອມຢູ່ໃຕ້ສາມີຂອງຕົນ, ໂດຍໂຄຣົບສິດອໍານາດຂອງສາມີດ້ວຍການນັບຖື, ເໝືອນດັ່ງຄຣິສຕະຈັກຍອມຢູ່ໃຕ້ພຣະຄຣິດສັນນັ້ນ.
- ສາມີມີໜ້າທີ່ຮັບຜິດຊອບເປັນຫົວໜ້າຄອບຄົວ, ເໝືອນດັ່ງພຣະຄຣິດເປັນສີສະຂອງຄຣິສຕະຈັກ.
- ສາມີຕ້ອງປົກປ້ອງແລະແລະລ້ຽງດູຄອບຄົວ. ນັບຖື ແລະໃຫ້ກຽດພັລຍາໃຫ້ເປັນຜູ້ຮ່ວມຮັບຜິດຊອບໜ້າທີ່ການງານຕ່າງໆ. ຜ່ານທາງຄວາມສັມພັນນີ້ໂດຍຖືວ່າເທົ່າທຽມກັນ, ຄວາມສັມພັນລະຫວ່າງສາມີ-ພັລຍາໃຫ້ຈະເຣີນເຕີບໂຕເຂັ້ມແຂງຂຶ້ນແຕ່ລະປີ ລະປີໄປເລື້ອຍໆ.

<u>ຄໍາຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u> (ເອເຟໂຊ 5:21-24)

1. ໂລກນີ້ໄດ້ໄດ້ມອງເຫັນການຍອມຟັງໄປຢ່າງໃດ?
2. ເປັນຫຍັງການຍອມເຊື່ອຟັງຈຶ່ງເປັນການຍາກ ແລະມີນິສັຍໂຕ້ຖຽງບໍ່ຍອມຮັບຄົນອື່ນ?
3. ໃນສິ່ງອື່ນໃນຊີວິດທີ່ຈໍາເປັນຕ້ອງຍອມເຊື່ອຟັງ ແລະຄວນທໍານັ້ນມີສິ່ງໃດອີກແດ່?
4. ເຮັດແນວໃດພວກເຮົາຈຶ່ງຈະຮັກສາບົດບາດການແຕ່ງງານຂອງພວກເຮົາຕາມທີ່ພຣະເຈົ້າໄດ້ຊົງອອກແບບໃຫ້ຄູ່ສົມຣົດມີຄວາມເຂັ້ມແຂງສົມບູນແບບໃນຊີວິດແຕ່ງງານນີ້ໄດ້?

2. <u>ການເຂົ້າໃຈເຣື່ອງຄວາມຮັກ:</u> (ເອເຟໂຊ 5:25-30)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ເອເຟໂຊ 5:25-30
- ຜູ້ຍິງແລະຜູ້ຊາຍເຂົ້າໃຈຄວາມຮັກໄປໃນທາງທີ່ແຕກຕ່າງກັນ. ພຣະເຈົ້າຊົງຮູ້ເຣື່ອງນີ້ດີ ເພາະພຣະອົງເປັນຜູ້ຊົງສ້າງເຂົາມາໃນທາງນີ້. ພຣະອົງຊົງເຂົ້າໃຈວ່າແຕ່ລະຄົນທີ່ພຣະອົງຊົງສ້າງຂຶ້ນມານັ້ນຕ້ອງມີຄວາມເຂົ້າ

ໃຈຄຳວ່າຮັກ.

- ການໃຊ້ ດີວີດີ ໜັງເຣື່ອງ Fireproof, ສາກທີ 19 ເປັນການເຕືອນ, ຊຶ່ງເຫັນໄດ້ວ່າການຂໍໂທດຂອງກາເລັບ ທີ່ໄປພົບນາງແຄເທີຣີນທີ່ນອນໄຂ້ຢູ່ບ່ອນ. ແລ້ວລາວກໍຂໍໂທດສຳລັບທາງທີ່ລາວໄດ້ເຮັດກັບນາງໃນ 7 ປີຜ່ານມາ. ໃນເມື່ອສາກນີ້ຈົບລົງ, ໃຫ້ຖາມ: ແມ່ນຫຍັງທີ່ເຮັດໃຫ້ກາເລັບໄດ້ສຳນຶກໃນທາງທີ່ລາວໄດ້ເຮັດໃຫ້ເມັຽຂອງລາວ? ລາວໄດ້ເຂົ້າໃນເຖິງຄວາມຮັກດີຂຶ້ນໄດ້ຢ່າງໃດ?

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** (ເອເຟໂຊ 5:25-30)

1. ໃນການທີ່ພຣະເຈົ້າໄດ້ຊົງສ້າງຜູ້ຍິງ ແລະຜູ້ຊາຍໃຫ້ເຂົ້າໃຈ ແລະປະສົບການຂອງຄວາມຮັກໃຫ້ມີຄວາມແຕກຕ່າງກັນນັ້ນ ທ່ານຄິດວ່າແນວໃດ?
2. ຈະບອກສາມີໃຫ້ຮັກພັລຍາຂອງລາວເໝືອນດັ່ງພຣະຄຣິດຮັກຄຣິສຕະຈັກໄດ້ແນວໃດ?
3. ການທີ່ສາມີ-ພັລຍາສູນເສັຽໃນການສືບຕໍ່ສະແດງຄວາມຮັກຕໍ່ກັນ ແລະກັນນັ້ນເປັນເພາະເຫດໃດ?

## 3 . <u>ການເຂົ້າໃຈການນັບຖືແລະໃຫ້ກຽດ:</u> (ເອເຟໂຊ 5:31-33; 1 ເປໂຕ 3:7)

- ໃຫ້ນັກຮຽນຜູ້ນຶ່ງອາສາສມັກອ່ານ ພຣະທັມ ເອເຟໂຊ 5:31-33; 1 ເປໂຕ 3:7
- ທ່ານຈະອະທິບາຍເຣື່ອງຄວາມຮັກ ແລະການນັບຖືທີ່ປາກົດຢູ່ໃນຂໍ້ທີ 33 ນັ້ນວ່າແນວໃດ?
- ພວກເຮົາຈະເຮັດແນວໃດ ເພື່ອໃຫ້ຄວາມຮັກ ແລະການຄວາມນັບຖືຊຶ່ງກັນແລະກັນຢ່າງມີປະສິດທິພາບ?
- ຕາມພຣະຄຳຂອງພຣະເຈົ້າໄດ້ຮຽກເອີ້ນໃຫ້ຜູ້ເປັນສາມີອອກຈາກບິດາມານດາໃຫ້ໄປຜູກພັນຢູ່ກັບພັລຍາຂອງເຂົາເຈົ້າເອງ, ໃຫ້ຮັກນາງເໝືອນດັ່ງຮັກຕົນເອງ.
- ເຊັ່ນດຽວກັນຜູ້ເປັນເມັຽກໍຕ້ອງນັບຖືຜົວຂອງຕົນ.

**<u>ຄຳຖາມເພື່ອແລກປ່ຽນຄວາມຄິດເຫັນໃນພຣະຄັມພີ:</u>** ເອເຟໂຊ 5:31-33; 1 ເປໂຕ 3:7

1. ໃນການພິຈາຣະນາເບິ່ງຄວາມສັມພັນໃນການແຕ່ງງານເຖິງການກາຍມາເປັນເນື້ອກາຍອັນດຽວກັນນັ້ນມີຄວາມໝາຍແນວໃດ?
2. ໃນການນັບຖືໃຫ້ກຽດນັ້ນເປັນຫຍັງຈຶ່ງມີຄວາມສຳຄັນສຳລັບຜູ້ຊາຍ?
3. ໃນການແຕ່ງງານທີ່ມີການເມີນເສີຍຕໍ່ຄວາມຮັກ ແລະຄວາມນັບຖື ໃຫ້ກຽດແລ້ວຈະມີຫຍັງເກີດຂຶ້ນ?

## <u>ພຣະຄັມພີແຫ່ງຄວາມຈິງ</u>

- ການຍອມຟັງພຣະຄຣິດສາມາດຊ່ອຍໃຫ້ພັລຍາທຳຕາມແບບຢ່າງ ແລະຢືນຢັນວ່າສາມີເປັນຜູ້ນຳເປັນແບບຢ່າງໃນເຮືອນຂອງເຂົາເຈົ້າ.
- ຕົວຢ່າງຂອງພຣະຄຣິດທີ່ຍອມເສັຽສລະເພື່ອຄຣິສຕະຈັກດ້ວຍຄວາມຮັກນັ້ນ ພຣະອົງຊົງສຳແດງໃນຫົນທາງແຫ່ງຄວາມຮັກ ໃຫ້ເປັນແບບຢ່າງຜູ້ເປັນສາມີໃຫ້ສະແດງຄວາມຮັກ ແລະທະນຸຖນອມພັລຍາຂອງລາວໃຫ້ຫລາຍທີ່ສຸດ.
- ເຂົ້າໃຈ, ນັບຖື, ຮັກ, ແລະໃຫ້ກຽດ ບໍ່ເຄີຍລົດຖານະຄວາມສັມພັນການແຕ່ງງານຂອງຄຣິສຕຽນຈັກເທື່ອ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ www.lsbf.org by JH**